ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

ກະຊວງກະສິກຳ ແລະ ປ່າໄມ້

ເລກທີ: 0041 /ກປ.06.

ນະຄອນຫຼວງວຽງຈັນ, ວັນທີ: 18 JAN 2006

# ຂໍ້ຕົກລົງ

## ຂອງລັດຖະມົນຕີວ່າການ ກະຊວງກະສິກຳ ແລະ ປ່າໄມ້ ວ່າດ້ວຍ ກອງເລຂາຈັດຕັ້ງປະຕິບັດ ຍຸດທະສາດປ່າໄມ້ 2020

- ອີງຕາມດຳລັດ ຂອງນາຍົກລັດຖະມົນຕີ ສະບັບເລກທີ 89/ນຍ, ລົງວັນທີ 22/06/1999 ວ່າດ້ວຍ ການຈັດຕັ້ງ ແລະ ການເຄື່ອນໄຫວ ຂອງກະຊວງກະສິກຳ ແລະ ປ່າໄມ້.
- ອີງຕາມດຳລັດ ຂອງນາຍົກລັດຖະມົນຕີ ສະບັບເລກທີ 229/ນຍ, ລົງວັນທີ 9/08/2005 ວ່າດ້ວຍ ການຮັບຮອງ ແລະ ປະກາດໃຊ້ ຍຸດທະສາດປ່າໄມ້ ຮອດປີ 2020 ຂອງ ສປປລາວ.
- ອີງຕາມການຄົ້ນຄວ້າ ແລະ ນຳສະເໜີ ຂອງກົມຈັດຕັ້ງ ແລະ ພະນັກງານ.

## ລັດຖະມົນຕີ ວ່າການ ກະຊວງກະສິກຳ ແລະ ປ່າໄມ້ ຕົກລົງ

**ມາດຕາ 1.** ມອບໝາຍຄວາມຮັບຜິດຊອບ ໃຫ້ກົມປ່າໄມ້ ເປັນກອງເລຂາຈັດຕັ້ງປະຕິບັດ ຍຸດທະສາດປ່າໄມ້ ຮອດປີ 2020 ຊຶ່ງມີພາລະບົດບາດ ໃນການປະສານງານ ກັບພາກສ່ວນທີ່ກ່ຽວຂ້ອງ ກ່ຽວກັບ ການຜັນຂະຫຍາຍ, ຈັດຕັ້ງປະຕິບັດ ແລະ ຕິດຕາມ ປະເມີນຜົນ ການຈັດຕັ້ງປະຕິບັດ ຍຸດທະສາດປ່າໄມ້ 2020.

**ມາດຕາ 2.** ໜ້າທີ່ຕົ້ນຕໍ ຂອງກອງເລຂາ ຈັດຕັ້ງປະຕິບັດ ຍຸດທະສາດປ່າໄມ້ 2020.

2.1. ເຜີຍແຜ່ ແລະ ສະໜອງ ຂໍ້ມູນ ຂ່າວສານ ກ່ຽວກັບຍຸດທະສາດປ່າໄມ້ ແລະ ກົນໄກ ໃນການ ຈັດຕັ້ງປະຕິບັດ ໃຫ້ແກ່ພາກສ່ວນອື່ນໆ ທີ່ກ່ຽວຂ້ອງ ລວມທັງ ຄູ່ຮ່ວມງານ ຫຼື ຜູ້ໃຫ້ທຶນ ທີ່ມີຄວາມສົນໃຈ ໃຫ້ການສະໜັບສະໜູນ ທາງດ້ານເຕັກນິກ ວິຊາການ ແລະ ທຶນຮອນ ເຂົ້າໃນການ ຈັດຕັ້ງປະຕິບັດ ຍຸດທະສາດ ປ່າໄມ້ 2020.

2.2. ສ້າງແຜນການ ເພື່ອຈັດຕັ້ງປະຕິບັດ ຍຸດທະສາດປ່າໄມ້ 2020 ປະຈໍາປີ ແລະ ປະຈໍາ 5 ປີ ເພື່ອນໍາສະເໜີ ຂໍອະນຸມັດ ຈາກກະຊວງກະສິກໍາ ແລະ ປ່າໄມ້ ຊຶ່ງປະກອບມີເນື້ອໃນ ດັ່ງລຸ່ມນີ້:

- ແຜນດໍາເນີນງານບຸລິມະສິດ ທີ່ຈະຈັດຕັ້ງປະຕິບັດ ປະຈໍາປີ ແລະ ປະຈໍາ 5 ປີ.
- ວິທີການ ຫຼື ມາດຕະການ ໃນການປະສານງານທີ່ຈໍາເປັນ ສໍາລັບການຈັດຕັ້ງປະຕິບັດ ແຜນດໍາເນີນງານບຸລິມະສິດ.
- ແຜນການຕິດຕາມ ການຈັດຕັ້ງປະຕິບັດ ຍຸດທະສາດປ່າໄມ້ 2020.
- ການລະດົມຂົນຂວາຍ ການຊ່ວຍເຫຼືອ ຈາກອົງການ ຜູ້ໃຫ້ທຶນສາກົນ ເຂົ້າໃນການຈັດຕັ້ງປະຕິບັດຍຸດທະສາດ ປ່າໄມ້ 2020.
- ບັນຫາອື່ນໆ ທີ່ກ່ຽວຂ້ອງ.

2.3. ສອ່ງແສງ ລາຍງານ ປະຈໍາປີ ແລະ ປະຈໍາ 5 ປີ ຕໍ່ ກະຊວງກະສິກໍາ ແລະ ປ່າໄມ້ ກ່ຽວກັບການຈັດຕັ້ງປະຕິບັດ ຍຸດທະສາດ ປ່າໄມ້ 2020 ຊຶ່ງປະກອບມີເນື້ອໃນສໍາຄັນ ດັ່ງລຸ່ມນີ້:

- ສະພາບການຈັດຕັ້ງປະຕິບັດ ແຜນດໍາເນີນງານບຸລິມະສິດ ໃນແຕ່ລະປີ.
- ຕີລາຄາຄວາມຄືບໜ້າ ແລະ ຂໍ້ຫຍຸ້ງຍາກ ໃນການຈັດຕັ້ງປະຕິບັດ ຍຸດທະສາດປ່າໄມ້ 2020.
- ຂໍ້ສະເໜີ ກ່ຽວກັບວິທີການ ຫຼື ມາດຕະການ ເພື່ອສືບຕໍ່ຈັດຕັ້ງປະຕິບັດ ຍຸດທະສາດ ປ່າໄມ້ 2020 ໃນຕໍ່ໜ້າ ໃຫ້ໄດ້ຮັບ ໝາກຜົນສູງສຸດ.
- ການຮ່ວມມື ແລະ ສະໜັບສະໜູນ ໃນການຈັດຕັ້ງປະຕິບັດ ຍຸດທະສາດປ່າໄມ້ 2020 ຂອງອົງການຜູ້ໃຫ້ທຶນສາກົນ.

2.4. ສັງລວມ ບົດສະເໜີໂຄງການຕ່າງໆ ທີ່ກ່ຽວຂ້ອງ ເພື່ອນໍາສະເໜີ ຂໍການຊ່ວຍເຫຼືອ ທາງດ້ານເຕັກນິກ ວິຊາການ ແລະ ທຶນຮອນ ຈາກຄູ່ຮ່ວມງານ ຫຼື ອົງການຜູ້ໃຫ້ທຶນ ສາກົນ ທີ່ມີຄວາມສົນໃຈ.

2.5. ປະສານງານ ກັບພາກສ່ວນທີ່ກ່ຽວຂ້ອງ ທັງພາຍໃນ ແລະ ສາກົນ ເພື່ອຈັດຕັ້ງປະຕິບັດ ແຜນດໍາເນີນງານບຸລິມະສິດຕ່າງໆ ທີ່ໄດ້ກໍານົດໄວ້ ໃນຍຸດທະສາດປ່າໄມ້ 2020.

2.6. ຕິດຕາມ ແລະ ປະເມີນຜົນ ຄວາມຄືບໜ້າ ໃນການຈັດຕັ້ງປະຕິບັດ ຍຸດທະສາດ ປ່າໄມ້ 2020 ນໍາພາກສ່ວນ ທີ່ກ່ຽວຂ້ອງ.

2.7. ກະກຽມບົດລາຍງານ ຜົນການຈັດຕັ້ງປະຕິບັດ ຍຸດທະສາດປ່າໄມ້ 2020 ເພື່ອນໍາສະເໜີຕໍ່ກອງປະຊຸມໂຕະມົນ ຫຼື ກອງປະຊຸມ ປຶກສາຫາລືອື່ນໆ ທີ່ເຫັນ ວ່າຈໍາເປັນ.

**ມາດຕາ 3. ກົງຈັກການຈັດຕັ້ງ, ໂຄງປະກອບບຸກຄະລາກອນ ແລະ ການນໍາ ຂອງກອງເລຂາຈັດຕັ້ງປະຕິບັດ ຍຸດທະສາດປ່າໄມ້ 2020.**

3.1. ຫົວໜ້າ ກົມປ່າໄມ້ ເປັນຫົວໜ້າກອງເລຂາ (ໂດຍຕໍາແໜ່ງ).

3.2. ຫົວໜ້າ ຫຼື ຮອງຫົວໜ້າ ພະແນກແຜນການ ແລະ ການຮ່ວມມື ເປັນຮອງຫົວໜ້າ ກອງເລຂາ (ໂດຍຕໍາແໜ່ງ) ແລະ ເປັນຜູ້ປະຈໍາການ ດໍາເນີນວຽກງານປົວຈໍາ.

3.3. ບັນດາຫົວໜ້າ ຫຼື ຮອງຫົວໜ້າພະແນກ ແລະ ກອງ ທີ່ຂຶ້ນກັບກົມປ່າໄມ້ ເປັນຄະນະກອງເລຂາ (ໂດຍຕໍາແໜ່ງ).

ພະນັກງານວິຊາການ ປະຈຳກອງເລຂາ ແມ່ນໃຫ້ຖືເອົາ ບຸກຄະລາກອນ ທີ່ສັງກັດ ຢູ່ພະແນກ ແຜນການ ແລະ ການຮ່ວມມື.

**ມາດຕາ 4. ລະບອບ ແລະ ວິທີເຮັດວຽກ**

4.1. ປະຕິບັດຫຼັກການລວມສູນ ປະຊາທິປະໄຕ, ນຳພາເປັນໝູ່ຄະນະ, ບຸກຄົນຮັບຜິດຊອບ. ລະບອບ ທິວໜ້າດຽວ ບົນພື້ນຖານ ມີການແບ່ງງານ ຢ່າງລະອຽດ ຈະແຈ້ງ.

4.2. ເຄື່ອນໄຫວ ຕາມແນວທາງນະໂຍບາຍຂອງພັກ ແລະ ຕາມກົດໝາຍ ແລະ ລະບຽບການ ຂອງລັດ.

4.3. ມີການພົວພັນ ແລະ ປະສານສົມທົບ ວຽກງານປ່າໄມ້ ແລະ ວຽກງານອື່ນໆ ທີ່ກ່ຽວຂ້ອງ.

**ມາດຕາ 5. ວ່າດ້ວຍບົດບັນຍັດ ສຸດທ້າຍ.**

5.1. ມອບໃຫ້ກົມປ່າໄມ້, ກອງເລຂາຈັດຕັ້ງປະຕິບັດ ຍຸດທະສາດປ່າໄມ້ 2020 ເປັນຜູ້ຜັນຂະຫຍາຍ ຂໍ້ຕົກລົງສະບັບນີ້ ໃຫ້ເປັນອັນລະອຽດ.

5.2. ຫ້ອງການກະຊວງ, ບັນດາກົມ, ກອງ, ສະຖາບັນ, ຂະແໜງການສາຍຕັ້ງ ຢູ່ທ້ອງຖິ່ນ, ໂຮງຮຽນ ແລະ ສູນຝຶກກະສິກຳ ແລະ ປ່າໄມ້ ຈົ່ງຮັບຮູ້ ແລະ ໃຫ້ຄວາມຮ່ວມມື ໃນການຈັດຕັ້ງ ປະຕິບັດ ຂໍ້ຕົກລົງສະບັບນີ້ ໃຫ້ໄດ້ຮັບໝາກຜົນ.

5.3. ຂໍ້ຕົກລົງສະບັບນີ້ ມີຜົນນຳໃຊ້ໄດ້ ນັບແຕ່ມື້ລົງລາຍເຊັນ ເປັນຕົ້ນໄປ.

ທ. ລັດຖະມົນຕີ ວ່າການ ກະຊວງກະສິກຳ ແລະ ປ່າໄມ້

ກະຊວງກະສິກຳແລະປ່າໄມ້
ລັດຖະມົນຕີ

ດຣ. ຕິ ພົມມະລັກ